ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດກອງປະຊຸມຮ່ວມລັດຖະມົນຕີການເງິນອາຊຽນ ແລະ ຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ 7





ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມຮ່ວມລັດຖະມົນຕີການເງິນອາຊຽນ ແລະ ຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ 7 ແບບທາງໄກ (The 7th ASEAN Finance Ministers and Central Bank Governors Meeting ຫຼື AFMGM) ແລະ ກອງປະຊຸມປິ່ນອ້ອມ ທີ່ໄດ້ໄຂຂຶ້ນໃນວັນທີ 30 ມີນາ 2021 ໂດຍການເປັນປະທານຮ່ວມລະຫວ່າງປະເທດບຣູໄນດາລຸສະລາມ ພາຍໃຕ້ຄຳຂວັນ "ພວກເຮົາຫ່ວງໃຍ, ພວກເຮົາກຽມພ້ອມ ພວກເຮົາພ້ອມກັນຈະເລີນ (We Care, We Prepare, We Prosper).

ກອງປະຊຸມຄັ້ງນີ້ ໄດ້ຮັບຟັງການແລກປ່ຽນແລະຜົນການຕີລາຄາສະພາບພັດທະນາເສດຖະກິດຢູ່ສາກົນ ແລະ ພາກພື້ນ ແລະ ທິດທາງໃນຕໍ່ໜ້າຕະຫຼອດຮອດນະໂຍບາຍການຮັບມືກັບການແຜ່ລະບາດຂອງພະຍາດ COVID-19 ແລະ ການຟື້ນຕົວຂອງເສດຖະກິດໃນພາກພື້ນຈາກບັນດາຜູ້ບໍລິຫານຂັ້ນສູງຂອງອົງການຈັດຕັ້ງສາກົນຄື: ອົງການການເງິນສາກົນ, ທະນາຄານໂລກ, ທະນາຄານພັດທະນາອາຊີ ແລະ ອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 (AMRO).

ບັນດາລັດຖະມົນຕີການເງິນ ແລະ ບັນດາຜູ້ວ່າການທະນາຄານກາງ ຈາກ 10 ປະເທດອາຊຽນ ຍັງໄດ້ປຶກສາຫາລື ແລະ ຕິດຕາມຊຸກຍູ້ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນແມ່ບົດການເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ ແລະ ຂໍ້ລິເລີ່ມອື່ນໆພາຍໃຕ້ແຜນແມ່ບົດປະຊາຄົມເສດຖະກິດອາຊຽນ (AEC Blueprint) ປີ 2016-2025. ຄຽງຄູ່ກັນນີ້, ຍັງຮັບຟັງການລາຍງານສະພາບເສດຖະການເງິນ-ທະນາຄານຈາກສະພາການຄ້າ ເອີຣົບ-ອາຊຽນ, ສ. ອາເມລິກາ-ອາຊຽນ ແລະ ສະພາທີ່ປຶກສາທຸລະກິດອາຊຽນ ເພື່ອເສີມຂະຫຍາຍການຮ່ວມມືກັບພາກທຸລະກິດຈາກພາກພື້ນຕ່າງໆ.



ພ້ອມດຽວກັນນີ້, ທ່ານ ນາງ ວັດທະນາ ດາລາລອຍ ໄດ້ມີຄຳເຫັນຕໍ່ກອງປະຊຸມ ໂດຍໄດ້ກ່າວຊົມເຊີຍຕໍ່ຄະນະເຮັດວຽກຮ່ວມກັນລະຫວ່າງ 10 ປະເທດອາຊຽນ ທີ່ໄດ້ເອົາໃຈໃສ່ຜັນຂະຫຍາຍບັນດາແຜນວຽກເພື່ອສົ່ງເສີມການເຊື່ອມໂຍງການເງິນໃນພາກພື້ນ ອັນໄດ້ເຮັດໃຫ້ບັນດາແຜນບູລິມະສິດສ່ວນໃຫຍ່ທີ່ກຳນົດໃນທຸກປີຖືກຈັດຕັ້ງປະຕິບັດຕາມຄາດໝາຍທີ່ວາງໄວ້. ພ້ອມດຽວກັນນີ້, ທ່ານຍັງໄດ້ມີຄຳເຫັນສະໜັບສະໜູນຂໍ້ລິເລີ່ມຂອງອາຊຽນຕິດພັນກັບການຊຸກຍູ້ການເງິນແບບຍືນຍົງ ຊຶ່ງຈະເປັນການດຶງດູດແຫຼ່ງທຶນຈາກສາກົນເຂົ້າພາກພື້ນເພີ່ມຕື່ມ, ທັງເປັນການປະກອບສ່ວນຮັກສາສິ່ງແວດລ້ອມ ແລະ ການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ 2030 ຂອງອົງການສະຫະປະຊາຊາດອີກດ້ວຍ.

ກອງປະຊຸມ AFMGM ຄັ້ງນີ້ ໄດ້ຮັບໝາກຜົນອັນຈົບງາມ ທ່າມກາງການປະກອບຄຳເຫັນຈາກບັນດາລັດຖະມົນຕີການ ແລະ ບັນດາຜູ້ວ່າການທະນາຄານກາງປະເທດສະມາຊິກອາຊຽນດ້ວຍບັນຍາກາດອັນຟົດຟື້ນ ເພື່ອເສີມຂະຫຍາຍສາຍພົວພັນແລະການຮ່ວມມືກັນ ໃນພາກພື້ນໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ.

# ຂ່າວ: ກົມຮ່ວມມືສາກົນ
# ພາບ: ນ. ວັນປະເສີດ ສົມບູນຂັນ

ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ